# ການນຳໃຊ້ຝຸ່ນແບບປະສົມປະສານສຳລັບເຂົ້ານາປັກດຳ
## ການໃສ່ຝຸ່ນອະນົງຄະທາດ (ຝຸ່ນເຄມີ)

ການນຳໃຊ້ຝຸ່ນແບບປະສົມປະສານແມ່ນລວມທັງການນຳໃຊ້ຝຸ່ນອະນົງຄະທາດ ແລະ ສິ່ງເສດເຫຼືອໃນທົ່ງນາທີ່ເໝາະສົມ. ສຳລັບການຈັດການ ກັບສິ່ງເສດເຫຼືອໃນນາເຂົ້າ ສາມາດຫາຂໍ້ມູນໄດ້ຢູ່ນຳ Rice Fact Sheet.

**ການນຳໃຊ້ຝຸ່ນໃນໄລຍະການຕົກກ້າ.**

ການປະຕິບັດການໃນໄລຍະການຕົກກ້າທີ່ດີເຮັດໃຫ້ຕົ້ນກ້າແຂງແຮງ ແລະ ທົນທານຕໍ່ບັນຫາການປັກດຳ ແລະ ບັນຫາອື່ນໆ ໃນນັ້ນ P ເປັນທາດທີ່ສຳຄັນ ແລະ N ເປັນທາດທີ່ຈຳເປັນຫຼາຍ. ໃສ່ N ຫຼາຍເກີນໄປອາດເຮັດໃຫ້ຕົ້ນກ້າບໍ່ແຂງແຮງ ແລະຂາດງ່າຍເມື່ອເວລາລົກໄປດຳ. ກ່ອນການກຽມດິນໃສ່ຝຸ່ນຄອກ 50 ກິໂລ/100ມ$^2$ (ຂີ້ງົວ ຫຼື ຄວຍທີ່ຕາກແຫ້ງ). ຫຼັງຈາກຕົກກ້າໄດ້ 10 ຫາ 15 ມື້ໃນຄະນະທີ່ມີ ການຮັກສາລະດັບນ້ຳໃຫ້ໃສ່ຝຸ່ນ 16-20-0 ໃນອັດຕາ 1 ກິໂລ/100ມ$^2$ ແລະ ໄລຍະການຕົກກ້າແມ່ນ 25 ຫາ 30 ວັນ.

**ການໃສ່ຝຸ່ນໃນທົ່ງນາ.**

ໃສ່ຫຍັງ ແລະ ໃສ່ຫຼາຍປານໃດ?

ທາດອາຫານໃນດິນທີ່ຂາດແຄນສູງແມ່ນ ທາດ N, P ແລະ K. ເມື່ອໃສ່ຝຸ່ນເຫລົ່ານີ້ ຖ້າຕົ້ນເຂົ້າມີອາການຂາດທາດອາຫານໃຫ້ສຶກສານຳປຶ້ມ (ເຊັ່ນວ່າ: Dobermann and Fairhurst, 2000[1]). ອັດຕາຝຸ່ນທີ່ໃສ່ຕົວຈິງແມ່ນຂຶ້ນກັບຝຸ່ນທີ່ສາມາດຊອກຫາຊື້ໄດ້ງ່າຍ ຕາມປົກກະຕິແລ້ວຈະມີແຕ່ຝຸ່ນປະສົມ, ດັ່ງນັ້ນອັດຕາຝຸ່ນ ທີ່ເໝາະສົມອາດຈະບໍ່ສາມາດໃສ່ຕາມຈຳນວນທີ່ແນະນຳ.



**N**: ໃສ່ 60 ກິໂລ/ຮຕ ສຳລັບແນວພັນປັບປຸງ ແລະ 30ກິໂລ/ຮຕ ສຳລັບແນວພັນພື້ນເມືອງ.

**P**: ຖ້າບໍ່ໄດ້ໃສ່ P ມາກ່ອນໃຫ້ໃສ່ 15 ກິໂລ $P_2O_5$/ຮຕ ສຳລັບດິນຊາຍ ແລະ 60 ກິໂລ $P_2O_5$/ຮຕ ສຳລັບດິນໜຽວ, ແຕ່ ຖ້າປີຜ່ານມາໄດ້ໃຊ້ P ມາກ່ອນ ໃສ່ 15-20 ກິໂລ $P_2O_5$/ຮຕ.

**K**: ໃຫ້ໃສ່ຖ້າຫາກບໍ່ມີການນຳໃຊ້ເຟືອງຢູ່ໃນນາ (80% ຂອງ K ແມ່ນມີຢູ່ນຳເຟືອງ) ຫຼືເມື່ອສັງເກດເຫັນວ່າ ດິນຂາດທາດ K ໃຫ້ໃສ່ 20-30 ກິໂລ $K_2O$/ຮຕ ຫຼື ຫຼາຍກ່ວານັ້ນ.

ໃສ່ເມື່ອໃດ?

ທັງໝົດຂອງ P, K ແລະ 10-20% ຂອງ N ຄວນໃສ່ໃນຄັ້ງທີ່ 1. ການໃສ່ຝຸ່ນໃນຄັ້ງທີ່1ນີ້ອາດຈະໃສ່ ໃນໄລຍະພາຍຫລັງທີ່ຄາດສຳເລັດ (ດີທີ່ສຸດສຳລັບ P ແລະ K) ຫຼື ຫວ່ານໃສ່ພາຍໃນໄລຍະ 1-2 ທິດຫຼັງຈາກປັກດຳ. ຖ້າໃຊ້ຝຸ່ນປະສົມໃຫ້ໃສ່ຕາມຈຳນວນ P ທີ່ຕ້ອງການ ສ່ວນ N ທີ່ຍັງບໍ່ເຕັມຕາມອັດຕາໃຫ້ໃສ່ໃນຄັ້ງທີ່ສອງ ແລະ ສາມໃຫ້ໃຊ້ ຝຸ່ນຢູເຣຍ (46-0-0).

ໄລຍະເວລາເຂົ້າແຕກກໍ ແລະ ເຂົ້າອອກຮວງ

| ໄລຍະຕົກກ້າ ຫາ ສຸກງອມ | ປະເພດແນວພັນ | ມື້ແຕກກໍ (DAT)[1] | ມື້ຈໍ່ຮວງ (DAT)[1] |
|---|---|---|---|
| 100-110 | ອາຍຸດໍ | | 20 |
| 120-130 | ອາຍຸກາງ | 20 | 35 |
| 140-150 | ອາຍຸປີ | 30 | 55 |

[1] DAT= ຈຳນວນວັນຫຼັງຈາກປັກດຳ ແລະ ກ້າທີ່ນຳມາປັກດຳແມ່ນມີອາຍຸ 30 ວັນ

ຝຸ່ນ N ຄວນແບ່ງໃສ່ສອງຄັ້ງ (ເທື່ອລະໜ້ອຍສຳລັບແນວພັນເຂົ້າດໍ ແລະ ແນວພັນເພື້ນເມືອງ) ຫຼື ສາມຄັ້ງ (ເຂົ້າກາງ ແລະ ເຂົ້າງັນ). **ເມື່ອໃສ່ສອງຄັ້ງ**, ຄັ້ງທີ່ໜຶ່ງໃສ່ພາຍໃນສອງທິດຫຼັງຈາກປັກດຳ ແລະ ຄັ້ງທີ່ສອງເມື່ອ ເຂົ້າຈໍ່ຮວງ. **ເມື່ອໃສ່ສາມຄັ້ງ**, ຄັ້ງທີ່ສອງ ແລະ ຄັ້ງທີ່ສາມ N ຄວນໃສ່ໄລຍະເຂົ້າແຕກກໍ ແລະ ເຂົ້າອອກຮວງ (ເບິ່ງຕາມຕາຕະລາງ). ເວລາໃສ່ອາດຈະຊ້າຫຼືໄວກ່ວາເວລາທີ່ກຳນົດໄວ 1 ທິດ ແລະ ຄວນໃສເມື່ອ ເງື່ອນໄຂດີ. **ຫ້າມໃສ່ N** (1)ເມື່ອບໍ່ມີລະດັບນ້ຳພຽງພໍ, (2) ມີນ້ຳຄ້າງຢູ່ໃບ, (3) ມີຝົນຕົກ ຫຼື (4) ຊ້າກ່ວາ 1 ອາທິກທິດຫຼັງຈາກເຂົ້າອອກຮວງ.

[1] Dobermann, A. and T. Farihurst. 2000.Rice: Nutrient management